**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 09 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2025

# ແຈ້ງການ

**ເຖິງ:** ບັນດາບໍລິສັດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຢູ່ ສປປ ລາວ ທີ່ມີຈຸດປະສົງໃນການອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ.

**ເລື່ອງ:** ການຍົກເວັ້ນຄ່າບໍລິການສຳລັບການອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2025;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1275/ຫສນຍ, ລົງວັນທີ 22 ກໍລະກົດ 2025;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 125/ສຄຄຊ, ລົງວັນທີ 18 ສິງຫາ 2025.

ຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງ ບັນດາບໍລິສັດທີ່ມີຈຸດປະສົງໃນການອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ຊາບທົ່ວເຖິງກັນວ່າ: ບໍລິສັດທີ່ອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ຢູ່ ສປປ ລາວ ແມ່ນຈະໄດ້ຮັບການຍົກເວັ້ນຄ່າບໍລິການສຳລັບການອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ສະເພາະໃນປີທີ່ອອກຈຳໜ່າຍຄັ້ງທຳອິດ ຊຶ່ງມີລາຍລະອຽດ ລຸ່ມນີ້:

1. ຄ່າຍື່ນສຳນວນຄຳຮ້ອງຂໍອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ໃຫ້ແກ່ມວນຊົນ ຈຳນວນ 10,000,000 ກີບ;
2. ຄ່າອອກໃບອະນຸຍາດການອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ໃຫ້ແກ່ມວນຊົນ 0,02% ກີບ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ 10,000,000 ກີບ ຕໍ່ປີ.

ສຳລັບການອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງໃນວົງຈຳກັດ ແລະ ອື່ນໆ ໃຫ້ປະຕິບັດຄືກັນກັບການອອກຈຳໜ່າຍໃຫ້ແກ່ມວນຊົນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດເພື່ອຊາບ ແລະ ເປັນບ່ອນອີງໃນການປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້, ກໍລະນີມີການປ່ຽນແປງ ຈະມີແຈ້ງການເພີ່ມຕື່ມຕາມພາຍຫຼັງ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

ສົມເຫລີມໄຊ ກົມມະສິດ